# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 02 ມີນາ 2008 ( 03-02-2008 )

## <u>ດຳຣົງຊີວິດ 3:16 ຕາມພຣະຄັມພີ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (2 ຕີໂມທຽວ 1:8-12; 3:14-4:4)

<u>ຄຳຖາມແຫ່ງຊີວິດ:</u> ເປັນຫຍັງພຣະຄັມພີຈຶ່ງສາມາດຊ່ອຍຂ້າພະເຈົ້າໃຫ້ດຳຣົງຊີວິດຢູ່ດ້ວຍຄວາມໝັ້ນໃຈ ທັ້ງທີ່ທຸກວັນນີ້ມີແຕ່ຄວາມຢ້ານກົວ ແລະໂລກກໍມີການປ່ຽນແປງຢູ່ສເມີ?

<u>ຄວາມຈິງໃນພຣະຄັມພີ:</u> ພຣະຄັມພີໄດ້ເປີດເຜີຍຄວາມຈິງເຣື່ອງຄວາມລອດພົ້ນ ແລະຄຳແນະນຳຂອງພຣະເຈົ້າ ສຳລັບການດຳຣົງຊີວິດອັນຖືກຕ້ອງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍທ່ານໃຫ້ດຳຣົງຊີວິດແຕ່ລະວັນດ້ວຍຄວາມໝັ້ນໃຈ ແລະຄວາມຫວັງທີ່ພຣະເຈົ້າຊົງປະທານໃຫ້ໂດຍ:

- ການເຫັນດີວ່າພຣະຄັມພີເປັນການດົນໃຈຈາກພຣະເຈົ້າເພື່ອຈະນຳມາໃຊ້ໃນຊີວິດຂອງທ່ານ ແລະ
- ການໃຫ້ຄຳໝັ້ນສັນຍາທີ່ຈະມີສ່ວນຮ່ວມໃນການອ່ານພຣະຄັມພີ ແລະສຶກສາແຕ່ລະວັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ຖາມ: ຄົນ ຫລືວັທນະທັມໃນ 50 ປີກ່ອນນັ້ນໄດ້ມີການປ່ຽນແປງແນວໃດ ຊຶ່ງໃຫ້ເກີດຄວາມຢ້ານກົວ ແລະການປ່ຽນແປງຂອງໂລກ? ແມ່ນຫຍັງທີ່ທ່ານວ່າຈະບໍ່ມີການປ່ຽນແປງ?
- ໂລກ, ວັທນະທັມ, ຫລືຄົນໄດ້ປ່ຽນແປງໄປຫລາຍປານໃດ, ພຣະເຈົ້າ ແລະພຣະຄຳຂອງພຣະອົງກໍຍັງຢູ່ເໝືອນເດີມ. ບົດຮຽນນີ້ນີ້ຈະຊີ້ແຈງໃຫ້ພວກເຮົາວ່າ: ພຣະຄັມພີສາມາດຊ່ອຍພວກເຮົາໃຫ້ດຳຣົງຊີວິດແຕ່ລະວັນດ້ວຍຄວາມໝັ້ນໃຈຢູ່ໃນທ່າມກາງຄວາມຢ້ານກົວ ແລະສະຖານນະການ ການປ່ຽນແປງຂອງໂລກໄດ້.

1. <u>ຈົ່ງຢູ່ໃນຄວາມໝັ້ນໃຈໃນຂ່າວປະເສີດຂອງພຣະຄັມພີ:</u> ( ໒ ຕີໂມທຽວ 1:8-1໒ )

- ຂໍໃຫ້ນັກຮຽນອາສາສມັກອ່ານ ໒ ຕີໂມທຽວ 1:8-1໒ .
- ເອົາໜັງສືພິມ ແລະເມກາຊີນໄປໃຫ້ນັກຮຽນຊອກຫາ ຂ່າວດີ ແລະ ຂ່າວບໍ່ດີ, ໃຫ້ເວລາເຂົາເຈົ້າ 1-໒ ນາທີ ແລ້ວໃຫ້ເຂົາເຈົ້າເຣື່ອງຂ່າວທີ່ເຂົາເຈົ້າຊອກໄດ້ນັ້ນສູ່ກັນຟັງ.
- ບົດສົນທະນາ: ເປັນດ້ວຍເຫດໃດຜູ້ທີ່ເຊື່ອທັງຫລາຍລັງເລໃຈໃນການແບ່ງປັນຂ່າວປະເສີດຂອງພຣະເຢຊູໃນຖ້າມກາງຂ່າວຮ້າຍ. ນຳພານັກຮຽນຊີ້ແຈງຂ່າວປະເສີດຂອງພຣະຄຣິດເພື່ອເປັນພື້ນຖານຂອງຜູ້ທີ່ເຊື່ອ ຕາມ ໒ ຕີໂມທຽວ 1:8-12. ເຊັ່ນຕົວຢ່າງ: ພຣະອົງຊົງຮຽກເອີ້ນພວກເຮົາດ້ວຍຄວາມບໍຣິສຸດ; ພຣະອົງຊົງຊະຊະຄວາມຕາຍ ແລະເດີນໜ້າໄປກ່ອນພວກເຮົາ.
- ແນະນຳຫົນທາງໃຫ້ຜູ້ທີ່ເຊື່ອທັງຫລາຍທີ່ດຳຣົງຊີວິດແຕກຕ່າງກັນ, ຖ້າເຂົາເຈົ້າຕັ້ງໝັ້ນ ແລະຈົດຈໍ່ໃນພຣະຄັມພີແຫ່ງຂ່າວປະເສີດເຣື່ອງຂອງພຣະເຢຊູ ໃຫ້ເຂົາເຈົ້າໄດ້ນຳອອກໄປສູ່ໂລກ.
- ໃຫ້ປຽບທຽບ ແລະຕົວຢ່າງທີ່ແຕກຕ່າງກັນ ໃນເມື່ອພຣະຄັມພີຊ່ອຍໃຫ້ເຂົາເຈົ້າດຳຣົງຊີວິດຢູ່ໃນຖ້າມກາງອັນຕະລາຍ, ກັບພຣະເຈົ້າ ແລະໄວ້ວາງໃຈໃນພຣະຄັມພີ, ບັນດາຜູ້ທີ່ເຊື່ອທັງຫລາຍສາມາດຢືນໝັ້ນຄົງຢູ່ໃນຂ່າວປະເສີດຂອງພຣະເຢຊູໄດ້ບໍ່ວ່າຈະປະເຊີນໜ້າກັບການທົນທຸກທໍຣະມານ ແລະເຣື່ອງຕ່າງ ໆ ໃນຊີວິດໄດ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (໒ ຕີໂມທຽວ 1:8-1໒)

1. ແມ່ນຫຍັງທີ່ເຮັດໃຫ້ຕີໂມທຽວລະອາຍຕໍ່ຂ່າວປະເສີດ?
໒. ໂປໂລໄດ້ຢືນຢັນ ແລະໜູນໃຈຕີໂມທຽວຢ່າງໃດ?
3. ມີທາງໃດທີ່ຜູ້ເຊື່ອທັງຫລາຍສົມຄວນຈະທຳຕາມຂ່າວປະເສີດຫລາຍກວ່າໄປກ່ຽວຂ້ອງກັບການເມືອງ?
4. ເຮັດແນວໃດບັນດາຜູ້ທີ່ເຊື່ອຈະແນ່ໃຈວ່າເຂົາເຈົ້າບໍ່ໄດ້ໃຫ້ກຽດຂ່າວປະເສີດຂອງພຣະເຢຊູຄຣິດ ແລະພຣະຄັມພີ ຫລືມີຄວາມອາຍໃນການນຳຂ່າວປະເສີດອອກໄປ?

໒. <u>ປະຕິບັດຕາມຄຳແນະນຳຈາກພຣະຄັມພີ:</u> (໒ ຕີໂມທຽວ 3:14-17)

- ຂໍໃຫ້ອາສາສມັກອ່ານພຣະທັມ ໒ ຕີໂມທຽວ 3:14-17
- ພຣະຄຳທຸກ ໆ ຕອນມີຄວາມສຳຄັນ ແລະໄດ້ດົນໃຈຈາກພຣະເຈົ້າ. ພຣະທັມແຫ່ງຄວາມຈິງ, ເປັນພຣະທັມທີ່ສັກສິດ ຊຶ່ງມາຈາກພຣະເຈົ້າ ແລະຊຶ່ງບໍ່ແມ່ນມາຈາກສະຕິປັນຍາ ແລະຄວາມຄິດຂອງມະນຸດ.
- ບົດສົນທະນາ: ເປັນຫຍັງບາງຄົນຈຶ່ງປະຕິເສດພຣະຄັມພີຊຶ່ງເປັນພຣະຄຳຂອງພຣະເຈົ້າ, ຫລືວ່າຄຣິສຕຽນບໍ່ໄດ້ຢູ່ໃນຄວາມເຊື່ອ ຫລືເປັນຄຣິສຕຽນທີ່ບໍ່ຢາກເຮັດຫຍັງ.
- ຖາມ: ບັນຫາຢ່າງນີ້ຈະມີຜົນກະທົບຕໍ່ໂບດແນວໃດ?
- ຖາມ: ບັນຫານີ້ໄດ້ປ່ຽນແປງໃນການສຳພັນລະຫວ່າງຄົນບາງຄົນກັບພຣະຄຣິດຢ່າງໃດ?
- ໃຫ້ນັກຮຽນເວົ້າເຖິງການໃຊ້ພຣະຄັມພີແຕ່ລະວັນຂອງຕົນໃຫ້ກັນຟັງ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (໒ ຕີໂມທຽວ 3:14-17)

1. ໃນທາງໃດທີ່ທ່ານເຊື່ອໄວ້ວາງໃຈວ່າພຣະຄັມພີໄດ້ຕັດຜ່ານທາງຊີວິດຂອງທ່ານ?
໒. ທ່ານໄດ້ເຮັດໃຫ້ພຣະຄຳຜ່ານທາງທ່ານ ແລະການສນັບສນູນທຳຕາມພຣະຄັມພີ ແລະພຣະທັມທີ່ໂປໂລ

ໄດ້ຂຽນໄວ້ຕາມທີ່ພຣະເຈົ້າຊົງບັນດົນໃຈນັ້ນຢ່າງໃດ?
3. ໃນນຶ່ງປີທີ່ຜ່ານມາທ່ານໄດ້ຄຸ້ນເຄີຍກັບພຣະຄັມພີຫລາຍປານໃດ?

## 3. ເຫັນເຖິງຄວາມຈິງຂອງພຣະຄັມພີ: (2 ຕີໂມທຽວ 4:1-4)

- ຂໍໃຫ້ອາສາສມັກອ່ານ ພຣະທັມ 2 ຕີໂມທຽວ 4:1-4
- ພຣະເຢຊູຊົງເປັນຜູ້ນຳສາສນາໃນສມັຍຂອງພຣະອົງ, ແລະຜູ້ຂຽນພຣະຄັມພີໃໝ່ບໍ່ມີຄຳຖາມເຖິງສິດອຳນາດຂອງພຣະຄັມພີເດີມ.
- ໃຫ້ອາສາສມັກອ່ານພຣະທັມລູກາ 22:37; ໂຣມ 15:4; 1 ໂກຣິນໂທ 10:11; ແລະ 2 ເປໂຕ 3:15-16 ຊຶ່ງພິສູດໄດ້ວ່າເປັນຄວາມເຊື່ອໄວ້ວາງໃຈອັນຖືກຕ້ອງ.
- ໃຫ້ນຳພານັກຮຽນສົນທະນາ ບາງທົ່ນທາງທີ່ຄົນພຍາຍາມລົດຄວາມໄວ້ວາງໃຈ ແລະຄວາມຕົງກັນກັບພຣະຄັມພີໃນໂລກຂອງພວກເຮົາໃນທຸກມື້ນີ້. ຢ່າງໃດກໍຕາມ, ໃຫ້ລະວັງໃນການຮຽນພຣະຄັມພີ, ການຈົດຈໍ່ຢູ່ກັບນິຍາຍຕ່າງ ໆ ຂອງໂລກດ້ວຍ.
- ໃຫ້ຕົວຢ່າງແຜນການສຶກສາໃນທາງທີ່ເຂົາເຈົ້າມີ ຫລື ຄວາມສາມາດ "ການຕຳນິ, ເໝາະສົມ, ແລະ ໜູນນ້ຳໃຈດ້ວຍຄວາມດີ, ຄວາມອົກທົນ ແລະການສອນ." (2ຕີໂມທຽວ 4:2) ດ້ວຍການອ່ານຕາມຂ້າງລຸ່ມນີ້:

1. ທ່ານໄດ້ພົບວ່າຫລານສາວ ອາຍຸ 16 ປີຂອງທ່ານກັບເພື່ອນຂອງລາວມີບັນຫາກັບເຈົ້າໜ້າທີ່ ແລະເປັນຈິງຕາມພຣະຄັມພີ. ຖາມວ່າ ທ່ານຈະໃຊ້ພຣະຄຳຕອນໃດ? ທ່ານຈະອະທິຖານຢ່າງໃດ?
2. ໃນຖານະທີ່ທ່ານເປັນຜູ້ໃຫຍ່ໃຫ້ດຳເນີນໃນການໜູນຈິດ ໜູນໃຈເດັກນ້ອຍຕໍ່ໄປ, ຖ້າເດັກນ້ອຍບໍ່ໄດ້ຮັບການໜູນຈິດໜູນໃຈແລະກໍມີຊີວິດທີ່ມີບັນຫາຢູ່ໃນບ້ານເຮືອນ. ທ່ານຈະແບ່ງປັນພຣະທັມ ແລະ ຄຳເວົ້າທີ່ຈະເປັນການເລົ້າໂລມຈິດໃຈລາວຢ່າງໃດ?
3. ຕໍ່ຄົນໜຸ່ມທີ່ເປັນເພື່ອນບ້ານຂອງທ່ານທີ່ບໍ່ມີຄວາມເຊື່ອ. ຫລາຍເທື່ອທ່ານໄດ້ສັງເກດຕາມຄວາມຈິງໃນພຣະຄັມພີແລ້ວ ຄວນຈະຊ່ອຍໃນຊີວິດການແຕ່ງງານຂອງເຂົາເຈົ້າ ແລະການເປັນພໍ່ແມ່ທີ່ດີຂອງລູກ ໆ. ທ່ານຈະແບ່ງປັນຄວາມຈິງຈາກພຣະຄັມພີ ໃນເມື່ອເຂົາເຈົ້າບໍ່ອ່ານພຣະຄັມພີ ແລະບໍ່ໄປໂບດນັ້ນຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (2 ຕີໂມທຽວ 4:1-4)
1. ທ່ານຈະໃຫ້ປະຣິມານສູງສຸດຂອງພຣະຄຳຕອນນີ້ທີ່ໂປໂລໃຫ້ແກ່ຕີໂມທຽວຢ່າງໃດ?
2. ທ່ານໄດ້ເຫັນສັງຄົມຂອງພວກເຮົາສມັຍນີ້ທີ່ "ຢາກໄດ້ຍິນ" ບາງສິ່ງບາງຢ່າງໃໝ່ ໆ ນັ້ນຢ່າງໃດ? ແມ່ນຫຍັງທີ່ເຂົາເຈົ້າໃຊ້ມາຍົວະເຍົ້າກວນໃຈພວກເຮົາ?

## ບົດຮຽນພຣະຄັມພີແຫ່ງຄວາມຈິງນີ້

- ບັນດາຜູ້ທີ່ເຊື່ອທັງຫລາຍສາມາດຍືນຢູ່ໄດ້ດ້ວຍຄວາມໝັ້ນໃຈໃນຂ່າວປະເສີດຖ້າຍອມທົນທຸກ ແລະປະຕິບັດຕາມ.
- ບັນດາຜູ້ທີ່ເຊື່ອຄວນຈະຮູ້ ແລະຝຶກຝົນຄວາມເຊື່ອຕາມແຜນການແນະນຳຂອງພຣະຄັມພີ.
- ພຣະຄັມພີເປັນແຜນນຳທາງຂອງຜູ້ທີ່ເຊື່ອທັງຫລາຍໃຫ້ປະກາດພຣະກິດຕິຄຸນຂອງພຣະຄຣິດ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )